ສຳນັກງານໃຫຍ່ | ເລກທີ: 007 /ທຄຕລ.ສພບ

ນະຄອນຫຼວງວຽງຈັນ, ວັນທີ: 11 ມີນາ 2024

# ມະຕິ
## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
## ຄັ້ງທີ 1 ປະຈຳປີ 2024, ວັນທີ 11/03/2024

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 1 ປະຈຳປີ 2024 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 09:00-11:30 ໂມງ ວັນທີ 11 ມີນາ 2024 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ບຸນປອນ ວັນນະຈິດ ປະທານສະພາບໍລິຫານ, ມີສະມາຊິກສະພາບໍລິຫານເຂົ້າຮ່ວມ 07 ທ່ານ (ສະມາຊິກສະພາບໍລິຫານທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມປະກອບມີ 01 ທ່ານຈາກຜູ້ຖືຮຸ້ນຍຸດທະສາດ), ມີຄະນະອຳນວຍການ ແລະ ພະແນກທີ່ກ່ຽວຂ້ອງເຂົ້າຮ່ວມເປັນຜູ້ສັງເກດການ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານກວດກາໃນປີ 2023;
2. ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານບັນຊີໃນປີ 2023;
3. ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງໃນໄຕມາດ1 ປີ 2024;
4. ຮັບຊາບລາຍງານຜົນດຳເນີນທຸລະກິດຕົວເລກຮອດເດືອນ 02/2024;
5. ຮັບຮອງການກູ້ຢືມເງິນຂອງລູກຄ້າບໍລິສັດ 01 ລາຍການ;
6. ຮັບຮອງຜູ້ກວດສອບອິດສະຫຼະປະຈຳປີ 2024;
7. ຮັບຮອງແບບ ແລະ ວິທີການປະເມີນສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ບັນດາຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2023 ແລະ 2024;
8. ຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມບັນດາຄະນະກຳມະການຂອງສະພາບໍລິຫານປະຈຳປີ 2024;
9. ຮັບຮອງແຜນການຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2023
   - ມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອເຂົ້າຮ່ວມກອງປະຊຸມ: 25/03/2024
   - ມື້ເປີດກອງປະຊຸມຜູ້ຖືຮຸ້ນ: 29/04/2024, ເວລາ 14:30 ໂມງ
   - ສະຖານທີ່: ໂຮງແຮມລາວພລາຊາ
   - ວາລະກອງປະຊຸມ:

     ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2022

     ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2023

     ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລ ປະຈຳປີ 2023

     ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2024

ວາລະທີ 5: ສະເໜີ ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2024

ວາລະທີ 6: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານ ທຄຕລ

**ປະທານສະພາບໍລິຫານ**

**ບູນປອນ ວັນນະຈິດ**